ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເລກທີ /ກວຕ

ນະຄອນຫຼວງວຽງຈັນ, ວັນທີ

# ຂໍ້ຕົກລົງ

## ຂອງ ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍ ການຄຸ້ມຄອງ, ກວດກາ ແລະ ນຳໃຊ້ ລະບົບກົດລະຫັດ ຢູ່ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍມາດຕະຖານ (ສະບັບປັບປຸງ), ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;
- ອີງຕາມກົດໝາຍ ວ່າດ້ວຍການວັດແທກ (ສະບັບປັບປຸງ), ສະບັບເລກທີ 036/ສພຊ, ລົງວັນທີ 13 ທັນວາ 2013;
- ອີງຕາມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ), ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມກົດໝາຍ ວ່າດ້ວຍປົກປ້ອງຜູ້ຊົມໃຊ້, ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມການສະເໜີ ຂອງກົມມາດຕະຖານ ແລະ ວັດແທກ ເລກທີ 0528/ກວຕ.ກມວ, ລົງວັນທີ 21 ມີນາ 2018.

### ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ນຳໃຊ້ລະບົບກົດລະຫັດ ຢູ່ ສປປ ລາວ, ບົນພື້ນຖານຄວາມຖືກຕ້ອງຕາມລະບຽບ, ຫຼັກການ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ແນໃສ່ຊຸກຍູ້ສົ່ງເສີມການຜະລິດ, ບໍລິການທີ່ມີຄຸນນະພາບ, ຖືກຕ້ອງກັບສະພາບຄວາມເປັນຈິງ ແລະ ເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 ກົດລະຫັດ**

ກົດລະຫັດ (Barcode)-ບາໂຄດ ແມ່ນມາດຕະຖານ ທີ່ນຳໃຊ້ເຂົ້າໃນການຄຸ້ມຄອງ, ຜະລິດ, ກວດກາ, ກວດທຽບ, ລະບຸຕົວຕົນຂອງສິນຄ້າ, ການຂົນສົ່ງ ແລະ ລະບົບສາງ, ເຊິ່ງສາມາດນຳໃຊ້ໄດ້ຢ່າງກວ້າງຂວາງ, ອຳນວຍຄວາມສະດວກໃຫ້ແກ່ການຈັດຈຳໜ່າຍທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ລະບົບກົດລະຫັດ** ໝາຍເຖິງ: ລະບົບການກຳນົດ, ອອກແບບ, ນຳໃຊ້ ແລະ ກວດກາເຄື່ອງໝາຍກົດລະຫັດ Barcode-ບາໂຄດ ແລະ RFID-ອາເອຟໄອດີ.
2. **ກົດລະຫັດເສັ້ນຕັ້ງ** Barcode-ບາໂຄດ ໝາຍເຖິງສັນຍາລັກທີ່ມີລັກສະນະເປັນເສັ້ນຕັ້ງ ຫຼື ເອີ້ນວ່າ Barcode-ບາໂຄດ ເຊິ່ງເປັນຕົວແທນຂອງຕົວເລກ ຫຼື ຕົວອັກສອນ ທີ່ສາມາດອ່ານໄດ້ໂດຍເຄື່ອງສະແກນກົດລະຫັດບາໂຄດ Barcode-ບາໂຄດ;
3. **RFID-ອາເອຟໄອດີ (Radio Frequency Identification)** ໝາຍເຖິງ ແຜ່ງອີເລັກໂຕຼນິກທີ່ບັນຈຸຂໍ້ມູນທີ່ສາມາດຕິດຕາມການເຄື່ອນຍ້າຍຂອງສິນຄ້າ ດ້ວຍຄື້ນຄວາມຖີ່ວິທະຍຸ;
4. **GLN-ຈີແອວເອັນ (Global Location Number):** ເປັນເລກລະຫັດບົ່ງບອກທີ່ຕັ້ງຂອງບໍລິສັດ.
5. **GS1-ຈີເອສ1 (The First of Global Standard)** ໝາຍເຖິງອົງກອນມາດຕະຖານສາກົນອັນດັບ1 ເຊິ່ງເປັນຜູ້ກຳນົດໝາຍເລກລະຫັດ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປົກປ້ອງລະບົບກົດລະຫັດໃຫ້ແຕ່ລະສາຂາ ແລະ ສະມາຊິກກົດລະຫັດທົ່ວໂລກ;
6. **EAN/UPC-ອີເອເອັນ/ຢູພີຊີ** (European Article Numbering/Universal Product Code) ໝາຍເຖິງເລກກົດລະຫັດຢູຣົບ ແລະ ຂອງສາກົນ ທີ່ມີຕົວເລກ 13 ຫຼັກ ໃຊ້ເພື່ອເປັນລະຫັດຂອງສິນຄ້າຂາຍຍ່ອຍ;
7. **ITF-14-ໄອທີເອຟ14 (Interleaved 2 of 5-14)** ໝາຍເຖິງກົດລະຫັດ ທີ່ມີຕົວເລກ 14 ຫຼັກໃຊ້ກັບແກັດ ແລະ ກ່ອງບັນຈຸສິນຄ້າ;
8. **GS1-128** ໝາຍເຖິງກົດລະຫັດ ທີ່ໃຊ້ໃນລະບົບການຂົນສົ່ງ ແລະ ລະບົບສາງ ທີ່ສາມາດໃສ່ຂໍ້ມູນຂອງສິນຄ້າທັງເປັນຕົວເລກ ແລະ ຕົວອັກສອນໄດ້ຫຼາຍ;
9. **GS1-ຈີເອສ1 Data Matrix** ໝາຍເຖິງລະຫັດ ກົດລະຫັດ 2 ມິຕິ ເຊິ່ງຈະໃຊ້ກັບອຸປະກອນການແພດ ຫຼື ພາຊະນະທີ່ເປັນໂລຫະ;
10. **GS1-ຈີເອສ1 Data Bar** ໝາຍເຖິງກົດລະຫັດທີ່ໃຊ້ກັບສິນຄ້າທີ່ອາຍຸສັ້ນ, ເໜົ່າເປື່ອຍງ່າຍເຊັ່ນ: ພືດ, ຜັກ, ໝາກໄມ້, ຊີ້ນ ແລະ ອື່ນໆ;
11. **ໝາຍເລກກົດລະຫັດ** ໝາຍເຖິງ: ຕົວເລກລະຫັດຂອງ Barcode-ບາໂຄດ ແລະ RFID-ອາເອຟໄອດີ.
12. **GTIN-ຈີທີໄອເອັນ (Global Trade Item Number):** ໝາຍເຖິງໝາຍເລກປະຈຳຕົວຂອງສິນຄ້າ ທີ່ເປັນສາກົນ;
13. **ສະມາຊິກ:** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມາຂຶ້ນທະບຽນຂໍນຳໃຊ້ກົດລະຫັດກັບໜ່ວຍງານກົດລະຫັດ ຫຼື ອົງການທີ່ຖືກມອບໝາຍ.

14. **ຜູ້ດຳເນີນທຸລະກິດ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກຳທາງທຸລະກິດ, ມີທະບຽນຖືກຕ້ອງຕາມກົດໝາຍວິສາຫະກິດຂອງ ສປປ ລາວ;
15. **ຜູ້ຊົມໃຊ້** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊົມໃຊ້ຜະລິດຕະພັນ ສິນຄ້າ;
16. **ການໝາຍຄຸນນະພາບ** ໝາຍເຖິງສັນຍາລັກທີ່ໄດ້ຜ່ານການກວດສອບ ແລະ ໄດ້ຮັບໃບຢັ້ງຢືນຄຸນນະພາບຈາກ ກົມມາດຕະຖານ ແລະ ວັດແທກ;
17. **ມາດຕະຖານ ແຫ່ງຊາດລາວ** ຂຽນຫຍໍ້ (ມລ) ໝາຍເຖິງມາດຕະຖານທີ່ສະພາມາດຕະຖານແຫ່ງຊາດໄດ້ຮັບຮອງ ປະກາດໃຊ້ໂດຍ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
18. **ການຢັ້ງຢືນຄຸນນະພາບ** ໝາຍເຖິງຂັ້ນຕອນການກວດກາຄວາມສອດຄ່ອງ ແລະ ໄດ້ອອກໃບຢັ້ງຢືນຄຸນນະພາບ ໂດຍອົງການທີ່ມີສິດກວດກາຂອງຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ທີ່ໄດ້ກຳນົດໄວ້;

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຄຸ້ມຄອງ, ດຳເນີນການຜະລິດ, ບໍລິການ ແລະ ນຳໃຊ້ ລະບົບກົດລະຫັດຢູ່ໃນ ສປປ ລາວ.

## ໝວດທີ 2
## ປະເພດ ແລະ ສະຕິກເກີ ຂອງກົດລະຫັດ

### ມາດຕາ 5 ປະເພດຂອງກົດລະຫັດ

ປະເພດກົດລະຫັດ ທີ່ໄດ້ຖືກຮັບຮອງ ແລະ ຜ່ານການຕົກລົງເຫັນດີນຳໃຊ້ໃນປັດຈຸບັນ ຂອງອົງການກົດລະຫັດ GS1 ມີຄື:

1. EAN/UPC;
2. ITF-14;
3. GS1-128;
4. GS1 Data Matrix;
5. GS1 Data Bar
6. RFID

### ມາດຕາ 6 ສະຕິກເກີກົດລະຫັດ

ສະຕິກເກີກົດລະຫັດ ທີ່ຈະຕິດໃສ່ຜະລິດຕະພັນສິນຄ້າທຸກປະເພດ ແລະ ທຸກຊະນິດ ຕ້ອງຕິດໃສ່ເບື້ອງນອກຂອງສິນຄ້າ ບ່ອນທີ່ເຫັນໄດ້ງ່າຍ; ຕົວໜັງສື, ເສັ້ນກົດລະຫັດຕ້ອງຈະແຈ້ງດີ, ສະອາດ, ກັນນ້ຳໄດ້ ແລະ ບໍ່ລອກງ່າຍ (ຍົກເວັ້ນພາຊະນະບັນຈຸທີ່ຢູ່ໃຕ້ດິນ).

ສະຕິກເກີກົດລະຫັດ ປະກອບດ້ວຍ:

1. ເສັ້ນກົດລະຫັດຂອງ ຜະລິດຕະພັນສິນຄ້າ;
2. ໝາຍເລກກົດລະຫັດທີ່ເປັນທາງການສຳລັບຜະລິດຕະພັນສິນຄ້າ;
3. ຂະໜາດຂອງແຜ່ນສະຕິກເກີ ຕາມມາດຕະຖານກຳນົດໄວ້.

**ມາດຕາ 7 ການກວດກາ ແລະ ຢັ້ງຢືນ**

ທຸກກົດລະຫັດ ທີ່ໄດ້ກຳນົດໃນມາດຕາ 5 ຂ້າງເທິງ ແມ່ນຈະຕ້ອງມີການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ.

# ໝວດທີ 3

## ຫຼັກການພື້ນຖານ, ການຢັ້ງຢືນ, ຄ່າທຳນຽມ ແລະ ການປັບໃໝ

**ມາດຕາ 8 ຫຼັກການພື້ນຖານຂອງການຢັ້ງຢືນການນຳໃຊ້**

ບັນດາຫຼັກການພື້ນຖານ ເພື່ອຍົກສູງຄຸນນະພາບ ແລະ ປະສິດທິພາບທາງດ້ານເຕັກນິກ, ຮັບປະກັນໃຫ້ແກ່ຜູ້ຜະລິດ, ບໍລິການ ແລະ ຜູ້ຊົມໃຊ້ ມີດັ່ງນີ້:

1. ສ້າງມາດຕະຖານໃຫ້ເປັນອັນໜຶ່ງອັນດຽວກັນ ເພື່ອຄຸ້ມຄອງຂະບວນການຜະລິດ, ການບໍລິການ ແລະ ຜູ້ນຳໃຊ້ລະບົບກົດລະຫັດ;
2. ຮັບປະກັນການນຳໃຊ້ລະບົບເຕັກນິກໃໝ່ຢ່າງກ້ວາງຂວາງ, ສ້າງຄວາມຍຸຕິທຳ, ຄວາມສະເໝີພາບ, ຄວາມໂປ່ງໃສ ແລະ ສາມາດກວດສອບໄດ້;
3. ຮັບປະກັນໃຫ້ຜູ້ຜະລິດ, ບໍລິການ ແລະ ນຳໃຊ້ ໃຫ້ເປັນໄປຕາມລະບຽບ, ຫຼັກການ ຂອງມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
4. ທຸກຄັ້ງທີ່ເຈົ້າໜ້າທີ່ລົງກວດກາ ຕ້ອງມີໃບແຈ້ງການ ຫຼື ຂໍ້ຕົກລົງ ທີ່ອອກໃຫ້ໂດຍ ກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ຕາມການມອບໝາຍ.

**ມາດຕາ 9 ຮູບແບບການກວດກາ**

ການກວດກາ ຄຸນນະພາບ ແລະ ຄວາມຖືກຕ້ອງຂອງກົດລະຫັດມີ 3 ຮູບແບບຄື:

1. ກວດກາ ຄຸນນະພາບຂອງກົດລະຫັດ ກ່ອນການຕິດໃສ່ຜະລິດຕະພັນສິນຄ້າ ຫຼື ບັນຈຸພັນ ເພື່ອໃຫ້ສອດຄ່ອງຕາມລະບຽບການເຕັກນິກ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
2. ການກວດກາ ຄຸນນະພາບຂອງກົດລະຫັດ ແບບປົກກະຕິ ໜຶ່ງຄັ້ງຕໍ່ປີ;
3. ກວດກາ ຄຸນນະພາບຂອງກົດລະຫັດ ແບບກະທັນຫັນ (ກໍລະນີສຸກເສີນ), ແມ່ນການກວດກາ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

**ມາດຕາ 10 ການຂໍນຳໃຊ້ໝາຍເລກກົດລະຫັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງເພື່ອຂໍການນຳໃຊ້ໝາຍເລກກົດລະຫັດ ຕ້ອງໄດ້ຍື່ນຄຳຮ້ອງຂໍ ຕໍ່ອົງການຄຸ້ມຄອງທີ່ກ່ຽວຂ້ອງ.

ການປະກອບເອກະສານ ມີດັ່ງນີ້:

1. ຊຸດຄຳຮ້ອງ;
2. ສຳເນົາໃບທະບຽນວິສະຫະກິດ;

3. ສຳເນົາໃບຢັ້ງຢືນການມອບພັນທະອາກອນ;
4. ສຳເນົາໃບອານຸຍາດດຳເນີນທຸລະກິດ;
5. ຮູບພາບຜະລິດຕະພັນສິນຄ້າ;
6. ສຳເນົາບັດປະຈຳຕົວ, ສຳມະໂນຄົວ ຫຼື ໜັງສືຜ່ານແດນ (Passport)

**ມາດຕາ 11 ການພິຈາລະນາ ແລະ ອະນຸມັດ**

ຂັ້ນຕອນການພິຈາລະນາເອກະສານ ມີດັ່ງນີ້:

ກ. ການອະນຸມັດນຳໃຊ້ໝາຍເລກກົດລະຫັດ

1. ພະນັກງານຈະຮັບຄຳຮ້ອງໄວ້ເພື່ອພິຈາລະນາ ໃນເມື່ອເຫັນວ່າເອກະສານຄົບຖ້ວນຕາມທີ່ລະບຸໄວ້ໃນມາດຕາ 10 ຂ້າງເທິງ;
2. ໃນເມື່ອເອກະສານຖືກຕ້ອງ ແລະ ໄດ້ຜ່ານການກວດກາທີ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນແລ້ວ ຕ້ອງໄດ້ຮັບການພິຈາລະນາພາຍໃນ ເຈັດວັນ ລັດຖະການ.

ຂ. ການຕໍ່, ປ່ຽນແປງ ການນຳໃຊ້ໝາຍເລກກົດລະຫັດ

1. ຖ້າກໍລະນີມີຄວາມຕ້ອງການປ່ຽນແປງເນື້ອໃນ ຫຼື ເພີ່ມຈຳນວນໝາຍເລກກົດລະຫັດໃສ່ກັບຜະລິຕະພັນສິນຄ້າ ຕ້ອງໄດ້ຂໍນຳໃຊ້ໝາຍເລກກົດລະຫັດ ຕາມມາດຕາ 10 ຂ້າງເທິງ;
2. ຖ້າກໍລະນີເປັນສະມາຊິກເກົ່າ ບໍ່ມີຈຸດປະສົງເພີ່ມຈຳນວນໝາຍເລກ ແມ່ນຕ້ອງໄດ້ຊຳລະຄ່າບຳລຸງສະມາຊິກປະຈຳປີ ຈຶ່ງສາມາດນຳໃຊ້ໄດ້ໝາຍເລກທີ່ມີນັ້ນຕໍ່ໄປໄດ້.

**ມາດຕາ 12 ໃບຢັ້ງຢືນໝາຍເລກກົດລະຫັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດກ່ຽວກັບ ການຜະລິດ, ຈຳໜ່າຍ, ຈໍລະຈອນ ແລະ ບໍລິການຜະລິດຕະພັນສິນຄ້າ ຢູ່ໃນ ສປປ ລາວ ທີ່ຕ້ອງການນຳໃຊ້ກົດລະຫັດ ແມ່ນຕ້ອງໄດ້ຂໍການຢັ້ງຢືນ ຈາກສູນຢັ້ງຢືນມາດຕະຖານ ແລະ ກວດກາຄຸນນະພາບແຫ່ງຊາດ, ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ທີ່ຖືກມອບໝາຍ.

ໃບຢັ້ງຢືນໝາຍເລກກົດລະຫັດ ແມ່ນເອກະສານສຳຄັນທາງດ້ານກົດໝາຍ, ມີກຳນົດ ອອກໃຫ້ນຳໃຊ້ຄັ້ງດຽວ ແລະ ໃນແຕ່ລະປີຕ້ອງໄດ້ຊຳລະຄ່າບຳລຸງສະມາຊິກປະຈຳປີຕາມປົກກະຕິ.

**ມາດຕາ 13 ການເກັບຄ່າທຳນຽມ ແລະ ການປັບໃໝ**

ການຂຶ້ນທະບຽນ, ຢັ້ງຢືນຄຸນນະພາບ ແລະ ຄວາມຖືກຕ້ອງການນຳໃຊ້ກົດລະຫັດ ຕ້ອງໄດ້ເສຍຄ່າທຳນຽມ ແລະ ການປັບໃໝ ມີດັ່ງນີ້:

1. ຄ່າທຳນຽມ ແລະ ຄ່າບໍລິການເຂົ້າເປັນສະມາຊິກກົດລະຫັດ ແມ່ນອີງຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ;
2. ຄ່າປັບໃໝແມ່ນອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ມາດຕະການຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ແລະ ດຳລັດວ່າດ້ວຍ ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການວັດແທກ.

**ມາດຕາ 14 ການເກັບຮັກສາ ແລະ ສຳເນົາເອກະສານ**

ເອກະສານການກວດກາ ແລະ ຢັ້ງຢືນການນຳໃຊ້ໝາຍເລກກົດລະຫັດປະກອບມີ 03 ຊຸດ ມີດັ່ງນີ້:

1. ຊຸດທີ່ໜຶ່ງ, ອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນການນຳໃຊ້ໝາຍເລກກົດລະຫັດເກັບຮັກສາ;
2. ຊຸດທີ່ສອງ, ຜູ້ໄດ້ຮັບຢັ້ງຢືນການນຳໃຊ້ໝາຍເລກກົດລະຫັດ ເກັບຮັກສາ;
3. ຊຸດທີສາມ, ອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນ ຂັ້ນທ້ອງຖິ່ນເກັບສຳເນົາເພື່ອຕິດຕາມ.

# ໝວດທີ 4
## ສິດ, ແລະ ໜ້າທີ່ຂອງ
## ອົງການຄຸ້ມຄອງລະບົບກົດລະຫັດ

**ມາດຕາ 15 ອົງການຄຸ້ມຄອງລະບົບກົດລະຫັດ**

ອົງການຄຸ້ມຄອງ ລະບົບກົດລະຫັດ ແມ່ນສູນຢັ້ງຢືນມາດຕະຖານ ແລະ ກວດກາຄຸນນະພາບແຫ່ງຊາດ, ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ຕາມການມອບໝາຍ.

**ມາດຕາ 16 ສິດຂອງອົງການຄຸ້ມຄອງລະບົບກົດລະຫັດ**

ອົງການຄຸ້ມຄອງກົດລະຫັດ ມີສິດ ດັ່ງນີ້:

1. ຄຸ້ມຄອງການອອກໝາຍເລກ, ລະບົບການບໍລິການ, ກວດທຽບ ແລະ ກວດກາຄຸນນະພາບຂອງກົດລະຫັດໃຫ້ສອດຄ່ອງ ຕາມລະບຽບການເຕັກນິກ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
2. ເກັບຕົວຢ່າງຂອງຜະລິດຕະພັນສິນຄ້າ ທີ່ນຳໃຊ້ໝາຍເລກກົດລະຫັດໄປກວດກາ ຄຸນນະພາບ ແລະ ຄວາມຖືກຕ້ອງ ໃນການນຳໃຊ້ໝາຍເລກກົດລະຫັດໃຫ້ສອດຄ່ອງຕາມລະບຽບການເຕັກນິກ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
3. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ພາລະບົດບາດຂອງໜ່ວຍງານກົດລະຫັດ.

**ມາດຕາ 17 ໜ້າທີ່ຂອງອົງການຄຸ້ມຄອງລະບົບກົດລະຫັດ**

ອົງການຄຸ້ມຄອງລະບົບກົດລະຫັດ ມີໜ້າທີ່ ດັ່ງນີ້:

1. ເຜີຍແຜ່ພາລະບົດບາດຂອງອົງການ, ປະສານສົມທົບກັບພາກສ່ວນກ່ຽວຂ້ອງຕ່າງໆກ່ຽວກັບການປະກາດໃຊ້ລະບົບກົດລະຫັດ;
2. ສ້າງ, ຮຽບຮຽງ, ປັບປຸງບັນດາລະບຽບການ, ແບບຟອມ ແລະ ນິຕິກຳທີ່ກ່ຽວຂ້ອງກັບການບໍລິການ, ການຄຸ້ມຄອງການດຳເນີນວຽກງານ ຂອງໜ່ວຍງານກົດລະຫັດ ເພື່ອຮັບປະກັນໃຫ້ແກ່ການບໍລິການ;

3. ຢັ້ງຢືນ, ຕິດຕາມ, ກວດກາ, ກວດທຽບຄວາມສອດຄ່ອງ ຂອງລະບົບກົດລະຫັດທີ່ສະມາຊິກນຳໃຊ້ໃຫ້ເປັນໄປຕາມລະບຽບການເຕັກນິກ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
4. ສ້າງຄວາມສະເໝີພາບ, ເອກະພາບ, ຍຸຕິທຳ ແລະ ໂປ່ງໃສ ໃນການບໍລິການໃຫ້ແກ່ສະມາຊິກ ຫຼື ບໍ່ແມ່ນສະມາຊິກ;
5. ເກັບຮັກສາ ແລະ ສະໜອງຂໍ້ມູນຕ່າງໆໃຫ້ສະມາຊິກ ຫຼື ພາກສ່ວນກ່ຽວຂ້ອງກັບວຽກງານການຄຸ້ມຄອງ, ກວດກາຄຸນນະພາບ ແລະ ຄວາມຖືກຕ້ອງ ໃນການນຳໃຊ້ ໝາຍເລກກົດລະຫັດໃຫ້ຖືກຕ້ອງ ແລະ ທັນເວລາ;
6. ລາຍງານສະພາບການເຄື່ອນໄຫວລົງກວດກາ, ກວດທຽບຄຸນນະພາບ ແລະ ຄວາມຖືກຕ້ອງໃນການນຳໃຊ້ ໝາຍເລກກົດລະຫັດໃຫ້ຄະນະນຳແຕ່ລະຂັ້ນຮັບຊາບຢ່າງເປັນປົກກະຕິ;
7. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອນຳສະເໜີຂັ້ນເທິງລົງກວດກາ ເມື່ອເຫັນວ່າມີການລະເມີດ ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
8. ປົກປັກຮັກສາຜົນປະໂຫຍດຂອງ ສະມາຊິກທີ່ນຳໃຊ້ໝາຍເລກກົດລະຫັດ;
9. ຮັບຜິດຊອບທຸກຜົນເສຍຫາຍທີ່ເກີດຂຶ້ນຍ້ອນ ການອອກໝາຍເລກກົດລະຫັດ ທີ່ບໍ່ຖືກຕ້ອງຕາມລະບຽບຫຼັກການສາກົນ;
10. ໃຫ້ການຮ່ວມມື, ການບໍລິການ ແລະ ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ພະນັກງານປະຈຳໜ່ວຍງານ, ສະມາຊິກ ແລະ ຜູ້ຊົມໃຊ້ ທີ່ຕ້ອງການຂໍ້ມູນ, ຂໍ້ແນະນຳລວມເຖິງການລົງຝຶກອົບຮົມຕ່າງໆ;
11. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນພາລະບົດບາດ, ລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 5
## ສິດ, ພັນທະຂອງສະມາຊິກ ແລະ ຜູ້ຊົມໃຊ້ ລະບົບກົດລະຫັດ

### ມາດຕາ 18 ນິຍາມສະມາຊິກ

ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມາຂຶ້ນທະບຽນຂໍນຳໃຊ້ກົດລະຫັດກັບໜ່ວຍງານກົດລະຫັດ ຫຼື ອົງການທີ່ຖືກມອບໝາຍ.

### ມາດຕາ 19 ສິດ ຂອງສະມາຊິກ ລະບົບກົດລະຫັດ

ສະມາຊິກຂອງລະບົບກົດລະຫັດ ມີສິດສະເໝີພາບ, ເທົ່າທຽມ ແລະ ເອກະພາບກັນ ມີດັ່ງນີ້:

1. ສາມາດເລືອກໃຊ້ບໍລິການໝາຍເລກກົດລະຫັດນຳ ກົມມາດຕະຖານ ແລະ ວັດແທກ ຈາກ 9 ໝາຍເລກ, 99 ໝາຍເລກ ແລະ 9999 ໝາຍເລກ;

- ຖ້າຜູ້ສະໝັກ ຫາກເປັນຫົວໜ່ວຍທຸລະກິດ ຫຼື ບໍລິສັດທີ່ສ້າງຕັ້ງ ຫຼື ເລີ່ມດຳເນີນກິດຈະການໃໝ່, ການກຳນົດຈຳນວນໝາຍເລກ ແລະ ຄິດໄລ່ຄ່າລົງທະບຽນສະໝັກ ແລະ ຄ່າບຳລຸງສະມາຊິກ ແມ່ນຈະພິຈາລະນາຕາມທຶນຈົດທະບຽນເປັນຫຼັກ;

- ຖ້າຜູ້ສະໝັກ ຫາກເປັນຫົວໜ່ວຍທຸລະກິດ ຫຼື ບໍລິສັດທີ່ໄດ້ຜ່ານການດຳເນີນງານມາເປັນເວລາຫຼາຍປີແລ້ວ ການກຳນົດຈຳນວນໝາຍເລກ ແລະ ຄິດໄລ່ຄ່າລົງທະບຽນສະໝັກ ແລະ ຄ່າບຳລຸງສະມາຊິກ ແມ່ນຈະພິຈາລະນາຕາມແຜນລາຍຮັບຂອງປີລ້າສຸດເປັນຫຼັກ.

2. ມີສິດເລືອກໃຊ້ ເລກໝາຍກົດລະຫັດໃສ່ກັບສິນຄ້າທີ່ຕົນເອງຕ້ອງການ, ໂດຍຜ່ານການກວດກາຂອງໜ່ວຍງານກົດລະຫັດ ຕາມລະບຽບການເຕັກນິກ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
3. ມີສິດໄດ້ຮັບການບໍລິການ ຈາກອົງການຄຸ້ມຄອງລະບົບກົດລະຫັດຢ່າງຍຸຕິທຳ ເຊັ່ນ ການຮັບເອກະສານສະໝັກເຂົ້າເປັນສະມາຊິກ, ການແນະນຳວິທີການກຳນົດເລກໝາຍກົດລະຫັດສິນຄ້າຂອງບໍລິສັດ, ວິທີນຳໃຊ້, ວິທີກວດກາຄຸນນະພາບ ແລະ ຄວາມຖືກຕ້ອງຂອງລະບົບກົດລະຫັດ, ຮ້ອງຮຽນຕໍ່ພາກສ່ວນກ່ຽວຂ້ອງ ເມື່ອເຫັນວ່າການໃຊ້ບໍລິການບໍ່ໄດ້ຮັບຄວາມເປັນທຳ, ບໍ່ສອດຄ່ອງຕາມມາດຕະຖານ ແລະ ອື່ນໆ;
4. ມີສິດແຈ້ງ, ລາຍງານຂໍ້ມູນ ກ່ຽວກັບຄຸນນະພາບຂອງບໍລິສັດທີ່ສະໜອງອຸປະກອນ, ເຄື່ອງມື, ເຄື່ອງຈັກ ແລະ ການບໍລິການຫຼັງການຂາຍ ທີ່ລະເມີດລະບຽບການ ໃນການນຳໃຊ້ກົດລະຫັດ;
5. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ, ສັນຍາ ແລະ ກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 20 ສິດຂອງຜູ້ຊົມໃຊ້ຜະລິດຕະພັນສິນຄ້າ

ຜູ້ຊົມໃຊ້ຜະລິດຕະພັນ ແລະ ສິນຄ້າ ທີ່ມີໝາຍເລກກົດລະຫັດ ມີສິດ ດັ່ງນີ້:

1. ເລືອກໃຊ້ຜະລິດຕະພັນສິນຄ້າ ແລະ ການບໍລິການ ຕາມຄວາມຕ້ອງການ;
2. ຮ້ອງຮຽນຕໍ່ພາກສ່ວນທີ່ກ່ຽວຂ້ອງເມື່ອເຫັນວ່າ ການນຳໃຊ້ໝາຍເລກກົດລະຫັດໃສ່ຜະລິດຕະພັນສິນຄ້າ ແລະ ການບໍລິການທີ່ບໍ່ໄດ້ຮັບຄວາມເປັນທຳ ຫຼື ມີການໂຄສະນາເກີນຄວາມເປັນຈິງ;
3. ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເມື່ອເຫັນວ່າຜູ້ດຳເນີນທຸລະກິດທີ່ນຳໃຊ້ໝາຍເລກກົດລະຫັດໃສ່ຜະລິດຕະພັນສິນຄ້າ ແລະ ການບໍລິການ ສ້າງຜົນກະທົບຕໍ່ສັງຄົມ;
4. ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບ ຄຸນນະພາບ ແລະ ການບໍລິການຂອງລະບົບກົດລະຫັດ;
5. ແຈ້ງພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການລະເມີດມາດຕະຖານ ແລະ ລະບຽບການເຕັກນິກ;
6. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 21 ພັນທະຂອງສະມາຊິກ

ສະມາຊິກທີ່ນຳໃຊ້ລະບົບກົດລະຫັດ ມີພັນທະທີ່ຕ້ອງປະຕິບັດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດກ່ຽວກັບ ການຜະລິດ, ຈຳໜ່າຍ, ຈໍລະຈອນ ແລະ ບໍລິການຜະລິດຕະພັນສິນຄ້າ ຢູ່ໃນ ສປປ ລາວ ຕ້ອງໄດ້ຜ່ານການຢັ້ງຢືນການນຳໃຊ້ກົດລະຫັດ, ຈາກສູນຢັ້ງຢືນມາດຕະຖານ ແລະ ກວດກາຄຸນນະພາບແຫ່ງຊາດ, ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນ ທີ່ຖືກມອບໝາຍ;
2. ປະກອບເອກະສານສະມັກເຂົ້າເປັນສະມາຊິກ, ຊຳລະຄ່າລົງທະບຽນ ແລະ ຄ່າບຳລຸງສະມາຊິກຢ່າງຖືກຕ້ອງຕາມລະບຽບການທຸກປະການ (ບໍ່ມີຂໍ້ຍົກເວັ້ນ);

3. ນໍາເອົາໝາຍເລກກົດລະຫັດ ໄປນໍາໃຊ້ກັບສິນຄ້າທີ່ບໍລິສັດຄຸ້ມຄອງຕາມສັນຍາໃຫ້ຖືກ ຕ້ອງ, ເໝາະສົມກັບຕົວສິນຄ້າ ເຊັ່ນ: ສີສັນ, ຂະໜາດ, ລົດຊາດ, ກິ່ນ, ບັນຈຸພັນ, ຈຸດຕິດຕັ້ງກົດລະຫັດ ແລະ ແຈ້ງມາຍັງໜ່ວຍງານ ພາຍຫຼັງການນໍາໃຊ້;
4. ລາຍງານຜົນການນໍາໃຊ້ ໃຫ້ແກ່ອົງການຄຸ້ມຄອງກົດລະຫັດຢ່າງເປັນປົກກະຕິ ເພື່ອຮັບຊາບເຖິງສະພາບການນໍາໃຊ້ຕົວຈິງ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລ້ວຊອກຫາວິທີແກ້ໄຂຮ່ວມກັນ;
5. ເຂົ້າຮ່ວມໃນຂະບວນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງສະມາຊິກ ແລະ ຜູ້ນໍາໃຊ້;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບ ແລະ ສັນຍາທີ່ກ່ຽວຂ້ອງ.

**ມາດຕາ 22 ພັນທະຂອງຜູ້ຊົມໃຊ້ຜະລິດຕະພັນສິນຄ້າ**

ຜູ້ຊົມໃຊ້ຜະລິດຕະພັນສິນຄ້າ ທີ່ນໍາໃຊ້ກົດລະຫັດ ມີພັນທະ ດັ່ງນີ້:

1. ນໍາໃຊ້ຜະລິດຕະພັນສິນຄ້າ ທີ່ໄດ້ຮັບການຢັ້ງຢືນຄຸນນະພາບຈາກພາກສ່ວນທີ່ກ່ຽວຂ້ອງ;
2. ນໍາໃຊ້ຜະລິດຕະພັນສິນຄ້າ ຕາມຄໍາແນະນໍາ ຂອງຜູ້ໃຫ້ການບໍລິການ;
3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 23 ຂໍ້ຫ້າມສໍາລັບສະມາຊິກ ທີ່ນໍາໃຊ້ກົດລະຫັດ**

ຫ້າມສະມາຊິກ ທີ່ນໍາໃຊ້ກົດລະຫັດ ມີພຶດຕິກໍາ ດັ່ງນີ້:

1. ອອກລະຫັດ, ໝາຍເລກ, ຜະລິດສະຕິກເກີລະບົບກົດລະຫັດ ດ້ວຍຕົນເອງໂດຍບໍ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຈາກ ກົມມາດຕະຖານ ແລະ ວັດແທກ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ທີ່ຖືກມອບໝາຍ;
2. ປັບປຸງ ແລະ ດັດແກ້ເສັ້ນລະຫັດ, ຕົວເລກ, ສີສັນ, ຂະໜາດ ຫຼື ວັດສະດຸທີ່ນໍາມາຜະລິດສະຕິກເກີລະບົບກົດລະຫັດ ທີ່ໄດ້ຜ່ານການກວດກາ, ອອກໃບຢັ້ງຢືນ ແລະ ຄວາມຖືກຕ້ອງແລ້ວ;
3. ຂັດຂວາງການປະຕິບັດງານ ຂອງເຈົ້າໜ້າທີ່ ທີ່ລົງກວດກາ, ຫ້າມໃຫ້ສິນບົນ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ກວດກາຄຸນນະພາບລະບົບກົດລະຫັດ;
4. ປອມແປງເອກະສານສະມາຊິກ, ເອກະສານໝາຍເລກ, ໃບຢັ້ງຢືນ ແລະ ຄວາມຖືກຕ້ອງຂອງລະບົບກົດລະຫັດ.

**ມາດຕາ 24 ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ຮັບຜິດຊອບວຽກງານລະບົບກົດລະຫັດ ມີພຶດຕິກໍາ ດັ່ງນີ້:

1. ພະນັກງງານທຸກໆຄົນໃນໜ່ວຍງານລະບົບກົດລະຫັດ ທີ່ບໍ່ໄດ້ຮັບການແຕ່ງຕັ້ງລົງປະຕິ ບັດໜ້າທີ່ ແບບພາລະການ;

2. ປະລະໜ້າທີ່, ບໍ່ມີຄວາມຮັບຜິດຊອບ, ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ຮັບສິນບົນ, ສວຍໃຊ້ໜ້າທີ່-ຕຳແໜ່ງ ເພື່ອສ້າງຜົນປະໂຫຍດສ່ວນຕົວ, ແລະ ສ້າງເຄືອຂ່າຍການນຳໃຊ້ກົດລະຫັດ;
4. ກະທຳເອງ ຫຼື ສົມຮູ້ຮ່ວມຄິດ ໃນການປອມແປງ, ເຜີຍແຜ່ຄວາມລັບ, ແກ່ຍາວ ແລະ ຖ່ວງດຶງເວລາການດຳເນີນເອກະສານການຕ່າງໆ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ລະບຽບ ແລະ ກົດໝາຍ.

## ມາດຕາ 25 ຂໍ້ຫ້າມສຳບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ໝາຍເລກກົດລະຫັດຂອງຜູ້ອື່ນ ເພື່ອຜົນປະໂຫຍດໃຫ້ແກ່ຕົນເອງ ດ້ວຍຮູບແບບທາງກົງ ຫຼື ທາງອ້ອມ, ສ້າງອຸປະສັກກີດຂວາງ ແລະ ແຊກແຊງການເຮັດວຽກຂອງເຈົ້າໜ້າທີ່ຮັບຜິດຊອບວຽກງານກົດລະຫັດ;
2. ໂຄສະນາ, ຊວນເຊື່ອ, ປຸກລະດົມ, ຂົນຂວາຍ ຫຼື ສົ່ງເສີມການນຳໃຊ້ລະບົບກົດລະຫັດແບບພະລາການ ຫຼື ສະຕິກເກີກົດລະຫັດທີ່ບໍ່ໄດ້ຄຸນນະພາບ ແລະ ບໍ່ຖືກຕ້ອງຕາມ ລະບຽບການ;
3. ສ້າງມົນລະພິດຕໍ່ສິ່ງແວດລ້ອມ, ຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດຂໍ້ຕົກລົງສະບັບນີ້, ປົກປິດເຊື່ອງອຳການກະທຳທີ່ມີການລະເມີດລະບຽບການທີ່ກ່ຽວຂ້ອງ ກັບລະບົບກົດລະຫັດ;
4. ມີພຶດຕິກຳອື່ນ ທີ່ຜິດກັບລະບຽບກົດໝາຍ.

# ໝວດທີ 7
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການນຳໃຊ້ລະບົບກົດລະຫັດ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດ, ມາດຕະຖານ, ລະບຽບ, ເງື່ອນໄຂຕ່າງໆຂອງສະມາຊິກ ແລະ ການຄຸ້ມຄອງມາດຕະຖານລະບົບກົດລະຫັດ ຫຼື ຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບການປະຕິບັດນະໂຍບາຍອື່ນຕາມລະບຽບກົດໝາຍ.

## ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປັບໃໝ, ປະຕິບັດວິໄນ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາຕາມກໍລະນີເບົາ ຫຼື ໜັກ ທີ່ລະບຸໄວ້ຢູ່ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມອບໃຫ້ ກົມມາດຕະຖານ ແລະ ວັດແທກ, ສູນຢັ້ງຢືນມາດຕະຖານ ແລະ ກວດກາຄຸນນະພາບແຫ່ງຊາດ, ສົມທົບກັບຂະແໜງການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມພາລະບົດບາດຂອງຕົນ.

**ມາດຕາ 29 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ. ທຸກລະບຽບການທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**